# ວິທີນຳພາກຸ່ມສຶກສາພຣະຄັມພີ

## "ການວາງແຜນເພື່ອຈະສອນ"

ທ່ານຈະໃຊ້ເວລາໃຫ້ເປັນປະໂຍດໄດ້ຢ່າງໃດ? ທ່ານຈະເຮັດໃຫ້ເວລາສຶກສາພຣະຄຳພີໃຫ້ເປັນໂອກາດເພື່ອການປ່ຽນແປງຊີວິດຂອງຜູ້ສອນແລະຜູ້ຮຽນໄດ້ຢ່າງໃດ? ຈົ່ງພິສູດເບິ່ງສ່ວນປະກອບສຳຄັນ 5 ຢ່າງທີ່ຈະຊ່ວຍໃຫ້ການວາງແຜນເພື່ອຈະສອນໄດ້ຜົນດີຂື້ນ:

## I. <u>ວັດຖຸປະສົງຂອງການສອນ:</u> ການວາງເປົ້າໝາຍ

ການສອນແຕ່ລະຄັ້ງຈຳເປັນຕ້ອງມີຈຸດປະສົງທີ່ແຈ່ມແຈ້ງ. ຈຸດປະສົງກາຍມາເປັນເປົ້າໝາຍທີ່ເຮົາແນໃສ່ວ່າເຮົາຈະໄດ້ຫຍັງເວລາການຮຽນສິ້ນສຸດລົງ. "ສ່ວນປະກອບທີ່ສຳຄັນທີ່ສຸດໃນຫ້ອງຮຽນຄື <u>ນັກຮຽນ</u>. ທ່ານສາມາດຊ່ວຍຂະເຈົ້າຫຍັງແດ່ທຸກໆຄັ້ງທີ່ຂະເຈົ້ານັ່ງຮຽນຢູ່ນຳທ່ານ? ຂະເຈົ້າມີການປ່ຽນແປງຫຍັງບໍ່ຫຼັງຈາກການຮຽນແລ້ວ?"

### ຈຸດປະສົງຂອງການຮຽນ:

1. ເພື່ອຈະໄດ້ຮັບຄວາມຮູ້-ນັກຮຽນຈະສາມາດຮູ້ ແລະ ຈົດຈຳ ສິ່ງທີ່ໄດ້ຮຽນມາ.
2. ເພື່ອຄວາມເຂົ້າໃຈ-ນັກຮຽນຈະສາມາດອະທິບາຍ, ໃຫ້ຕົວຢ່າງ, ຫຼື ວາດພາບ ເຖິງຄວາມຄິດເຫັນ ຫຼື ຫຼັກການຕ່າງໆ ທີ່ຂະເຈົ້າໄດ້ຮຽນມາ.
3. ເພື່ອປະສົບການສ່ວນຕົວ-ນັກຮຽນຈະສາມາດແບ່ງປັນປະສົບການສ່ວນຕົວ ຫຼືຄວາມຄິດເຫັນທີ່ກ່ຽວຂ້ອງກັບຫົວເລື່ອງທີ່ກຳລັງສົນທະນາຢູ່.
4. ເພື່ອນຳໄປໃຊ້ໃຫ້ເກີດຜົນ -ນັກຮຽນຈະສາມາດນຳສິ່ງທີ່ສຶກສາໃນຫ້ອງຮຽນໄປໃຊ້ໃນຊີວິດ.

"ຖ້າເຮົາວາງເປົ້າໝາຍໄວ້ກ່ອນແລ້ວ, ຜູ້ສອນຈະສາມາດວາງແຜນການສອນ, ການປາໄສ ແລະ ການສົນທະນາ ຕ່າງໆໃຫ້ຕົງກັບເປົ້າໝາຍນັ້ນໆ."

## II. <u>ການຈັດຕຽມນັກຮຽນ:</u> ລໍ້ຈັກສູບນ້ຳໃຫ້ເຮັດວຽກ

ຜູ້ສອນຄິດຜິດຫຼາຍຖ້າເຂົາຄິດວ່າ ນັກຮຽນແຕ່ລະຄົນຢູ່ໃນຫ້ອງຕຽມພ້ອມທີ່ຈະຟັງແລະຈະຮຽນ. ຄວາມຈິງແລ້ວຜູ້ສອນມີໜ້າທີ່ຊ່ວຍນັກຮຽນແຕ່ລະຄົນໃຫ້ຕຽມພ້ອມ.

### -ຢ່າລືມຈຸດປະສົງໃນເວລາໂອ້ລົມ

ໃຊ້ການໂອ້ລົມເພື່ອຕຽມນັກຮຽນ ແຕ່ຈະຕ້ອງມີເປົ້າໝາຍ ແລະ ຄິດເຖິງສິ່ງທີ່ຈະຮຽນໃນເວລາຕໍ່ໄປ. ຢ່າສົນທະນາສິ່ງທີ່ບໍ່ເປັນປະໂຍດ ແລະນອກເລື່ອງ.

### -ຢ່າໃຊ້ສິ່ງຫຼອກລວງເພື່ອໃຫ້ນັກຮຽນຕັ້ງໃຈ

ສິ່ງຫຼອກລວງ ຫຼື ການຍົວະເຍົ້າ ອາດຈະເຮັດໃຫ້ນັກຮຽນຕົກໃຈ, ເກີດຄວາມຢ້ານກົວ, ຫຼື ເກີດຜິດໃຈ.

-ນຳພານັກຮຽນໃຫ້ເຂົ້າສູ່ການສຶກສາພຣະທັມ
ຊ່ວຍນັກຮຽນໃຫ້ຕຽມພ້ອມ ແລ້ວນຳຂະເຈົ້າເຂົ້າສູ່ການຮຽນ ຢ່າງນຽບນຽມ.

## III. ການສຶກສາພຣະທັມ: ບ່ອນແບກນ້ຳໜັກ

ເວລາສຶກສາພຣະທັມເປັນຫົວໃຈສຳຄັນຂອງການວາງແຜນ ເພາະມັນເປັນເວລາເພື່ອ ການວິຈັຍເນື້ອເຣື່ອງ, ການອະທິບາຍແນວຄວາມຄິດ, ການນຳໄປໃຊ້ໃຫ້ເກີດຜົນ, ຊັ່ນນະສູດຄຸນຄ່າ, ແລະຕໍ່ສູ້ກັບທ່າທີ ຫລືການດຳເນີນຊີວິດທີ່ບໍ່ຖືກຕ້ອງ. "ສິ່ງຈຳເປັນຢ່າງນຶ່ງຂອງການສອນ ກໍຄືການນຳປະສົບການ, ຄວາມເຂົ້າໃຈ, ແລະທ່າທີ່ຂອງຜູ້ສອນໄປໃຫ້ກັບຜູ້ຮຽນ ເພື່ອຂະເຈົ້າຈະໄດ້ປຽນແປງຊີວິດຂອງຕົນ"

-ການຈັດຫາວິທີສອນ
ທ່ານສາມາດຈັດການສຶກສາພຣະທັມໂດຍວິທີຕ່າງໆດັ່ງຕໍ່ໄປນີ້:

1. ຜູ້ສອນອະທິບາຍພຣະທັມເປັນຂໍ້ໆໄປ
2. ຈັດກຸ່ມນ້ອຍ 4-5 ຄົນແລ້ວໃຫ້ສຶກສາຮ່ວມກັນ, ຄຣູສອນເປັນຜູ້ໃຫ້ຄຳຖາມ, ນັກຮຽນເປັນຜູ້ຊ່ວຍກັນຫາຄຳຕອບ
3. ສຶກສາຫາແນວຄວາມຄິດ ໃນແຕ່ ລະພາກຕອນ ຂອງພຣະຄັມພີ
4. ສຶກສາພຣະທັມທີ່ກ່ຽວຂ້ອງກັບປະສົບການທີ່ເກີດຂຶ້ນກັບນັກຮຽນໃນປັດຈຸບັນ

-ສອນເພື່ອຂະເຈົ້າຈະໄດ້ຈົດຈຳ
ການເລົ່າເຣື່ອງໃນພຣະຄັມພີໃຫ້ນັກຮຽນຟັງນັ້ນບໍ່ພຽງພໍ ຖ້າທ່ານຈະສອນເພື່ອໃຫ້ຜູ້ຮຽນໄດ້ຮັບຄວາມຮູ້, ຖ້າ ທ່ານປາຖນາໃຫ້ຜູ້ຮຽນໄດ້ຈົດຈຳ ສິ່ງສຳຄັນຕ່າງໆທີ່ທ່ານໄດ້ສອນ. ວິທີຈະຊ່ວຍມີດັ່ງນີ້:

1. ບອກນັກຮຽນລ່ວງໜ້າວ່າໃນຕອນນີ້ທ່ານຈະສອນເຣື່ອງຫຍັງ
2. ຈັດຕຽມແລະສເນີຂໍ້ເຣື່ອງໃຫ້ແຈ່ມແຈ້ງ, ເນັ້ນຈຸດສຳຄັນໃນເວລາສອນ
3. ສເນີຂໍ້ເຣື່ອງເປັນພາກໆໄປຫລື ຈຸດຕໍ່ຈຸດ ຢ່າງເປັນລະບຽບ
4. ທົບທວນເລື້ອຍໆໃນເວລາສອນ

-ສອນເພື່ອຂະເຈົ້າຈະໄດ້ເຂົ້າໃຈ
ຊ່ວຍໃຫ້ຜູ້ຮຽນຮູ້ວ່າພຣະຄັມພີກຳລັງເວົ້າຫຍັງ, ຜູ້ຮຽນຫລາຍຄົນຮູ້ພຣະຄັມພີແຕ່ບໍ່ຮູ້ຄວາມໝາຍ. ວິທີຈະຊ່ວຍມີດັ່ງນີ້:

1. ເລີ້ມຈາກເຣື່ອງງ່າຍໆ ກ່ອນຈະນຳຜູ້ຮຽນໄປສູ່ ຫລັກການ ທີ່ສລັບຊັບຊ້ອນ
2. ເລີ້ມຈາກເຣື້ອງທີ່ຜູ້ຮຽນມີຄວາມຄຸ້ນເຄີຍກ່ອນຈະນຳຂະເຈົ້າໃຫ້ເຂົ້າໃຈ ຄຳເວົ້າ ແລະ ແນວຄວາມເຫັນ ຂອງ ພຣະຄັມພີ , ທ້າຍສຸດນຳຂະເຈົ້າໄປເຖິງ ຫລັກການສຳຄັນໃນເຣື້ອງຊີວິດນິຣັນ.

3. ອະທິບາຍແນວຄວາມເຫັນໃຫ້ຈະແຈ້ງໂດຍການໃຊ້ຕົວຢ່າງທີ່ຖືກຕ້ອງ ແລະ ຕົວຢ່າງທີ່ບໍ່ຖືກຕ້ອງ.
4. ຊ່ວຍໃຫ້ທຸກຢ່າງແຈ່ມແຈ້ງໂດຍການໃຊ້ຄຳຖາມເພື່ອຈະໄດ້ແນ່ໃຈວ່າຜູ້ຮຽນເຂົ້າໃຈຫລືບໍ່, ຢ່າໃຊ້ຄຳຖາມທີ່ສາມາດຕອບໄດ້ງ່າຍໆ "ແມ່ນແລ້ວ ຫລື ບໍ່ແມ່ນ"

### -ສອນເພື່ອຈະໃຫ້ທຸກຄົນໄດ້ມີສ່ວນກ່ຽວຂ້ອງ

ຜູ້ສອນມີໜ້າທີ່ສ້າງບັນຍາກາດໃນຫ້ອງຮຽນເພື່ອຜູ້ຮຽນຈະໄດ້ມີໂອກາດເລົ່າເຣື່ອງປະສົບການ, ສແດງຄວາມຄິດເຫັນ, ແລະບອກເຖິງຄວາມຮູ້ສຶກສ່ວນຕົວ. ວິທີຈະຊ່ວຍມີດັ່ງນີ້:

1. ສ້າງຄວາມເຊື່ອຖື ແລະ ການຮັບຮູ້ຊື່ງກັນແລະກັນ
2. ແກ້ໄຂຄຳຕອບທີ່ບໍ່ຖືກດ້ວຍຄວາມຣະມັດຣະວັງ
3. ຫລີກເວັ້ນການສແດງທ່າທີບໍ່ດີ ຫລື ວາງຕົວເໝືອນວ່າ ທ່ານຮູ້ທຸກຢ່າງ ແລະເໜືອກວ່າທຸກຄົນ
4. ເປັນຕົວຢ່າງໃຫ້ກັບຜູ້ຮຽນ, ຂະເຈົ້າຈະເບິ່ງການປະພຶດຂອງຜູ້ສອນ ຫລາຍກວ່າ ຄຳເວົ້າ ຫລື ຄຳສອນ (ຖ້າຜູ້ສອນບໍ່ໄດ້ປະຕິບັດໃນສິ່ງທີ່ຕົນກຳລັງສອນຄົນອື່ນ)
5. ການໃຊ້ກຸ່ມນ້ອຍ (4-5 ຄົນ)ຈະໄດ້ຜົນຫລາຍກວ່າກຸ່ມໃຫຍ່ (14-15 ຄົນ). ທຸກຄົນຈະມີໂອກາດມີສ່ວນຮ່ວມໃນການສົນທະນາ ເວລາມີຄົນນ້ອຍ.
6. ຖືວ່າຜູ້ຮຽນແຕ່ລະຄົນສຳຄັນ; ພຣະເຍຊູໄດ້ສະລະພຣະຊົນເພື່ອຂະເຈົ້າທຸກໆຄົນ.

### -ສອນເພື່ອຂະເຈົ້າຈະມີໂອກາດສ້າງຄວາມສັມພັນ

ໃຫ້ໂອກາດນັກຮຽນແຕ່ລະຄົນໄດ້ມີໂອກາດສ້າງຄວາມສຳພັນກັບຄົນອື່ນໆໃນຫ້ອງຮຽນ ໂດຍການຕັ້ງກຸ່ມນ້ອຍ ຫຼືຈັດກຸ່ມສະເພາະ ເຊັ່ນ: ກຸ່ມສາມີ/ພັລຍາ, ກຸ່ມຜູ້ຊາຍ, ກຸ່ມຜູ້ຍິງ, ແລະຈັດກຸ່ມ ນອກເວລາຮຽນ.

### -ສອນເພື່ອຂະເຈົ້າຈະໄດ້ປະຕິບັດຕາມພຣະທັມ

ພຣະເຍຊູຄຣິດໄດ້ສແດງໃຫ້ເຮົາເຫັນວ່າ "ການຮຽນແລະການກະທຳ" ຈະຕ້ອງຄູ່ຄຽງກັນໄປ. ແຕ່ງຕັ້ງນັກຮຽນຫລືກຸ່ມຫ້ອງຮຽນໃດ້ທຳສິ່ງໃດສິ່ງນຶ່ງເພື່ອຈະຊ່ວຍໃຫ້ຂະເຈົ້ານຳສິ່ງທີ່ໄດ້ຮຽນໄປປະຕິບັດ.

### -ເລືອກກິຈກັມເພື່ອປະກອບສ່ວນໃນການສຶກສາ

ຢ່າພຍາຍາມເຮັດຫຍັງຫລາຍຈົນເກີນໄປ. ປ່ຽນແປງເທື່ອລະນ້ອຍ, ສ້າງຄວາມເຊື່ອຖືເສັຍກ່ອນ, ຊອກຫາກິຈການທີ່ຄົນທັງຫລາຍເຫັນຊອບ, ມີຄວາມອົດທົນຕໍ່ຜູ້ທີ່ບໍ່ມີຄວາມສົນໃຈ.

## IV. <u>ເຖິງເປົ້າໝາຍທີ່ວາງໄວ້:</u> ຮອດຫລັກໄຊ

ເມື່ອການສຶກສາພຣະທັມສິ້ນສຸດລົງ, ນັກຮຽນສ່ວນຫລາຍຈະຕ້ອງໄປເຖິງເປົ້າໝາຍທີ່ທ່ານວາງໄວ້. ຖ້າເປົ້າໝາຍຂອງທ່ານແມ່ນ <u>ເພື່ອໃຫ້ຜູ້ຮຽນໄດ້ຮັບຄວາມຮູ້</u>, ເວລາການຮຽນຈົບລົງນັກຮຽນຈະສາມາດຮູ້ ແລະຈົດຈຳສິ່ງທີ່ໄດ້ຮຽນມາ. ຖ້າຂະເຈົ້າບໍ່ສາມາດຮູ້ ຫລື ຈົດຈຳຫຍັງເລີຍ, ທ່ານຕ້ອງຫາສາຍເຫດວ່າເປັນດ້ວຍເຫດໃດ? ທ່ານວາງແຜນການສອນຖືກຕ້ອງບໍ່? ທ່ານໃຊ້ວິທີສອນຖືກຕ້ອງບໍ່?

## V. <u>ການສລຸບ:</u> ການມັດທຸກຢ່າງໃຫ້ເຂົ້າກັນ

ທ່ານສຳເຣັດຈຸດປະສົງທີ່ວາງໄວ້; ຕອນນີ້ທ່ານຕຽມທີ່ຈະສລຸບທຸກຢ່າງທີ່ໄດ້ຮຽນມາກັບພວກນັກຮຽນ.

1. ປິດການຮຽນໂດຍບໍ່ໃຫ້ມີຫຍັງຄ້າງຄາຢູ່, ທ່ານໄດ້ນຳນັກຮຽນໄປເຖິງຈຸດທີ່ທ່ານໄດ້ບອກກັບທຸກໆຄົນໄວ້ແລ້ວ
2. ທົບທວນຈຸດໃຫ່ຍໆ ຫຼື ຂໍ້ຄວາມສຳຄັນ ທີ່ໄດ້ຮຽນມາ
3. ໃຫ້ໂອກາດນັກຮຽນເວົ້າເຖິງສິ່ງທີ່ຂະເຈົ້າໄດ້ຮັບ, ຄວາມຮູ້ສຶກສ່ວນຕົວ ຈາກສິ່ງທີ່ໄດ້ຮຽນ
4. ຊັກຊວນໃຫ້ນັກຮຽນນຳສິ່ງທີ່ຮຽນມາໄປປະຕິບັດໃນອາທິດທີ່ຈະມາເຖິງ

## ຈັດຕຽມນັກຮຽນເພື່ອເທື່ອໜ້າ

ຖ້າບົດຮຽນແບ່ງເປັນຫລາຍພາກ, ຜູ້ສອນມີໜ້າທີ່ຈັດຕຽມນັກຮຽນໄວ້ສຳລັບພາກຕໍ່ໆໄປ. ໃຫ້ວຽກບ້ານກັບນັກຮຽນເພື່ອຂະເຈົ້າຈະໄດ້ຕຽມພ້ອມທີ່ຈະສຶກສາບົດຮຽນພາກຕໍ່ໄປ.

(ຖ້າທ່ານໃຊ້ວິທີ "ການວາງແຜນເພື່ອຈະສອນ" ທີ່ໄດ້ແນະນຳມານີ້, ການສອນຂອງທ່ານຈະເກີດຜົນດີຂື້ນ, ການສອນ ແລະການຮຽນເພື່ອຈະໃຫ້ມີການປ່ຽນແປງຊີວິດຈຳເປັນຈະຕ້ອງຕິດຕາມແຜນທີ່ສົມບູນແບບ)

<u>Bibliography:</u>

Yount, Rick. *"Planning to Teach,"* in <u>The Teaching Ministry Of The Church</u> by Daryl Eldridge, Nashville: Broadman & Holman Publishers, 1995.